ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ຫ້ອງວ່າການແຂວງຄໍາມ່ວນ

ເລກທີ 01 /ຫວຂ

ຄໍາມ່ວນ, ວັນທີ 06 ມັງກອນ 2022

ດ່ວນທີ່ສຸດ

# ແຈ້ງການ

ເຖິງ: ບັນດາພະແນກການ, ອົງການທຽບເທົ່າຂັ້ນແຂວງ, ບັນດາເມືອງ, ການຈັດຕັ້ງທຸກພາກສ່ວນ ແລະ ປະຊາຊົນບັນດາເຜົ່າໃນທົ່ວແຂວງ.

ເລື່ອງ: ສືບຕໍ່ເພີ່ມທະວີຄວາມເຂັ້ມງວດໃນການຈັດຕັ້ງປະຕິບັດມາດຕະການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການແຜ່ລະບາດຂອງພະຍາດໂຄວິດ-19 ຢູ່ແຂວງຄໍາມ່ວນ.

- ອີງຕາມ ແຈ້ງການ ຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ສະບັບເລກທີ 1494/ຫສນຍ, ລົງວັນທີ 14 ພະຈິກ 2021
- ອີງຕາມ ຄໍາສັ່ງຂອງເຈົ້າແຂວງ ສະບັບເລກທີ 13/ຈຂ, ລົງວັນທີ 23 ພະຈິກ 2021 ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດ ໃນການຈັດຕັ້ງປະຕິບັດ ມາດຕະການ ປ້ອງກັນ, ຄວບຄຸມ ແລະ ແກ້ໄຂ ການລະບາດຂອງພະຍາດ ໂຄວິດ-19.
- ອີງຕາມ ການປຶກສາຫາລືຂອງ ຄະນະນໍາແຂວງ ຮ່ວມກັບຄະນະສະເພາະກິດຂັ້ນແຂວງ ໃນຄັ້ງວັນທີ 30 ທັນວາ 2021.
- ອີງຕາມ ທິດຊີ້ນໍາ ຂອງເຈົ້າແຂວງຄໍາມ່ວນ ໃນຄັ້ງວັນທີ 06 ມັງກອນ 2022.

ຜ່ານການຕິດຕາມ ປະເມີນສະພາບການແຜ່ລະບາດຂອງພະຍາດໂຄວິດ-19 ຢູ່ພາຍໃນແຂວງ,ປະຈຸບັນ ຍັງມີ ຜູ້ຕິດເຊື້ອໃນຊຸມຊົນແຕ່ລະວັນ, ຄວາມຮຸນແຮງໃນການແຜ່ລະບາດຈັດຢູ່ໃນລະດັບ 2 ແລະ ຍັງມີທ່າອ່ຽງເພີ່ມຂຶ້ນ. ສະນັ້ນ, ເພື່ອສືບຕໍ່ປະຕິບັດມາດຕະການ ປ້ອງກັນ, ຄວບຄຸມ ແລະ ແກ້ໄຂການແຜ່ລະບາດຂອງພະຍາດໂຄວິດ-19ຢ່າງເຂັ້ມງວດ.

ຫ້ອງວ່າການແຂວງ ຈຶ່ງແຈ້ງການມາຍັງທຸກພາກສ່ວນທັງພາກລັດ ແລະ ເອກະຊົນ ຕະຫຼອດເຖິງພໍ່ແມ່ປະຊາຊົນບັນດາເຜົ່າໃນທົ່ວແຂວງ ສືບຕໍ່ຈັດຕັ້ງປະຕິບັດມາດຕະການ ປ້ອງກັນ, ຄວບຄຸມ, ສະກັດກັ້ນການແຜ່ລະບາດຂອງພະຍາດໂຄວິດ-19 ຕາມແຈ້ງການ ຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ສະບັບເລກທີ 1494/ຫສນຍ, ລົງວັນທີ 14 ພະຈິກ 2021; ຄໍາສັ່ງຂອງເຈົ້າແຂວງຄໍາມ່ວນ ສະບັບເລກທີ 13/ຈຂ, ລົງວັນທີ 23 ພະຈິກ 2021 ວ່າດ້ວຍການສືບຕໍ່ເພີ່ມທະວີຄວາມເຂັ້ມງວດ ໃນການຈັດຕັ້ງປະຕິບັດມາດຕະການ ປ້ອງກັນ, ຄວບຄຸມ ແລະ ແກ້ໄຂການແຜ່ລະບາດຂອງພະຍາດໂຄວິດ-19 ຢູ່ແຂວງຄໍາມ່ວນ ນັບແຕ່ເດືອນ ມັງກອນ (1) 2022 ເປັນຕົ້ນໄປ, ຖ້າມີການປ່ຽນແປງໃນດ້ານມາດຕະການຕ່າງໆ ຈະມີແຈ້ງການມາຍັງທຸກພາກສ່ວນຊາບແຕ່ລະໄລຍະ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ທຸກພາກສ່ວນ ເພື່ອຮັບຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດການແຈ້ງການສະບັບນີ້ດ້ວຍ.

ຫົວໜ້າຫ້ອງວ່າການແຂວງຄໍາມ່ວນ

ຫ້ອງວ່າການ ແຂວງຄໍາມ່ວນ

ພັນຍິນ ລິນສະໝອນ

ບ່ອນສົ່ງ :
- ບັນດາພະແນກການ, ອົງການທຽບເທົ່າຂັ້ນແຂວງ ບ່ອນລະ 01 ສະບັບ
- ບັນດາເມືອງ, ເມືອງລະ 01 ສະບັບ.
- ຄະນະສະເພາະກິດຂັ້ນແຂວງ 01 ສະບັບ.
- ເກັບມ້ຽນ 01 ສະບັບ